# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 14
## Inspection of investment
## ການກວດກາການກິດຈະການລົງທຶນ

1. **ຄວາມໝາຍ ແລະ ຄວາມສຳຄັນ ຂອງການກວດກາກິດຈິການລົງທຶນ**

- **ຄວາມໝາຍ:**

ການຕິດຕາມກວດກາ ໝາຍເຖິງການຕິດຕາມ, ການພິຈາລະນາ, ການຕີລາຄາການເຄື່ອນໄຫວຂອງການຈັດຕັ້ງ ແລະ ບຸກຄົນບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ[1].

ຈາກຄວາມໝາຍທີ່ກ່າວມາຂ້າງເທິງ ເຫັນວ່າການຕິດຕາມກວດກາໂດຍລວມແລ້ວ ແມ່ນອົງການທີ່ເຮັດໜ້າທີ່ໃນການຕິດຕາມກວດກາຈະພິຈາລະນາຕີລາຄາການເຄື່ອນໄຫວ ຂອງອົງການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ ພາຍໃຕ້ຂອບເຂດສິດອຳນາດຂອງຕົນ, ພາຍຫຼັງມີການຕີລາຄາແລ້ວ ກໍຕ້ອງມີຄຳເຫັນ ເພື່ອໃຫ້ອົງການຈັດຕັ້ງ ຫຼື ບຸກຄົນທີ່ຖືກຕິດຕາມກວດການັ້ນມີການປັບປຸງ ຫຼື ປ່ຽນແປງກ່ຽວກັບການເຄື່ອນໄຫວຂອງຕົນ, ການຕິດຕາມກວດກາ ແມ່ນຊ່ວຍໃຫ້ອົງການຈັດຕັ້ງ ຫຼື ບຸກຄົນ ມີການເຄື່ອນໄຫວຕາມພາລະບົດບາດ ແລະ ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ.

ເວົ້າສະເພາະການກວດກາກິດຈະການລົງທຶນ ໝາຍເຖິງອົງການກວດກາວຽກງານການສົ່ງເສີມການລົງທຶນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນປີ 2016 ໂດຍມີ: ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ ແລະ ຍັງມີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ[2] ຊຶ່ງມີພາລະບົດບາດໃນການເຄື່ອນໄຫວວຽກງານໂດຍຖືເອົາລະບອບປະຊຸມປະຈຳສາມັນ ເດືອນລະ 02 ຄັ້ງ ຫຼື ກໍລະນີມີຄວາມຈຳເປັນ, ສາມາດເປີດກອງປະຊຸມວິສາມັນຕາມການຕົກລົງຂອງປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນເພື່ອຄົ້ນຄວ້າພິຈາລະນາ, ຊຸກຍູ້ກວດກາ, ຕິດຕາມ-ຄຸ້ມຄອງ, ສະຫຼຸບຖອດຖອນບົດຮຽນ,ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງລາຍງານໃຫ້ລັດຖະບານ ຫຼື ອົງການບໍລິຫານລັດຂັ້ນແຂວງຢ່າງເປັນປົກກະຕິ.

ເຄື່ອນໄຫວເພື່ອກວດກາການປະຕິບັດໜ້າທີ່ຂອງບັນດາພາກສ່ວນຕ່າງໆກ່ຽວກັບການຄຸ້ມຄອງ  ແລະ ເຄື່ອນໄຫວການລົງທຶນ ເພື່ອເຮັດແນວໃດໃຫ້ບັນດາອົງການດັ່ງກ່າວ ພ້ອມດ້ວຍພະນັກງານພ້ອມດ້ວຍພະນັກງານ ກໍຄືບຸກຄົນມີການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຂອງຕົນໂດຍບໍ່ຂັດກັບລັດຖະທຳມະນູນ, ບໍ່ຂັດກັບກົດໝາຍກົດໝາຍ ແລະ

---

[1] ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015, ມາດຕາ 3

[2] ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018, ຂໍ້ 2, ມາດຕາ 8.

ສາມາດແກ້ໄຂໄດ້ກ່ຽວກັບບັນດາຄໍາຮ້ອງຂໍຄວາມເປັນທໍາຕ່າງໆ ກ່ຽວກັບການເຄື່ອນໄຫວການຄຸ້ມຄອງ ແລະ ເຄື່ອນໄຫວການລົງທຶນ.

- **ຄວາມສໍາຄັນ:**

ການກວດກາກິດຈະການລົງທຶນ ແມ່ນມີຄວາມສໍາຄັນ ແລະ ຈໍາເປັນພາວະວິໄສ ໃນການສ້າງເງື່ອນໄຂໃຫ້ທຸກພາກສ່ວນໄດ້ເຂົ້າຮ່ວມໃນການຕິດຕາມກວດກາການຄຸ້ມຄອງ ແລະ ເຄື່ອນໄຫວລົງທຶນ ເພື່ອໃຫ້ອໍານາດລັດ, ລັດຖະທໍາມະນູນ ແລະ ກົດໝາຍມີຄວາມສັກສິດ, ສະກັດກັ້ນການລະເມີດກົດໝາຍ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນພະຍາດອາດຍາສິດ, ການສໍ້ລາດບັງຫຼວງ, ການສວຍໃຊ້ອໍານາດ, ໜ້າທີ່ຕໍາແໜ່ງ, ການເມີນເສີຍຕໍ່ໜ້າທີ່ ເຮັດໃຫ້ການຈັດຕັ້ງ ແລະ ບຸກຄະລາກອນ ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ.

ການກວດກາກິດຈະການລົງທຶນ ເປັນການສ້າງເງື່ອນໄຂໃຫ້ທຸກພາກສ່ວນໄດ້ເຂົ້າຮ່ວມໃນການຕິດຕາມກວດກາ ເນື່ອງຈາກວ່າ ອົງການທີ່ມີໜ້າທີ່ໃນການກວດການັ້ນ ນອກຈາກຈະກວດກາປົກກະຕິຕາມພາລະບົດບາດຂອງຕົນແລ້ວ ຍັງມີການກວດກາຕາມຄໍາຮ້ອງຂໍຄວາມເປັນທໍາຂອງທຸກພາກສ່ວນ, ດັ່ງນັ້ນ ໃນຈຸດນີ້ ຈຶ່ງເຮັດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການກວດກາ.

ບໍ່ວ່າວຽກງານໃດ ໃນຂົງເຂດໃດກໍຕາມ ຕ້ອງມີການຕິດຕາມກວດກາຜົນຂອງການຈັດຕັ້ງປະຕິບັດ, ຖ້າບໍ່ດັ່ງນັ້ນຈະບໍ່ສາມາດປະເມີນຜົນຂອງການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການທີ່ກ່ຽວຂ້ອງໄດ້, ການກວດກາກິດຈະການລົງທຶນ ຈຶ່ງມີຄວາມສໍາຄັນ ເພາະມີການກວດກາ ຈຶ່ງສາມາດປະເມີນ, ຖອດຖອນບົດຮຽນ ແລະ ສາມາດເຫັນໄດ້ຈຸດທີ່ຕ້ອງປັບປຸງແກ້ໄຂໃຫ້ມັນດີຂຶ້ນ ແລະ ວຽກງານກວດກາກໍເປັນວຽກງານທີ່ຈໍາເປັນ ໂດຍສະເພາະແມ່ນວຽກງານການເຄື່ອນໄຫວລົງທຶນ ເວົ້າສະເພາະ ເນື່ອງຈາກວ່າວຽກງານນີ້ເປັນວຽກງານທີ່ພົວພັນກັບຜົນປະໂຫຍດຂອງບຸກຄົນ ແລະ ການຈັດຕັ້ງທີ່ອາດຈະເກີດຂໍ້ຂັດແຍ່ງໂດຍກົງ, ເຮັດແນວໃດໃຫ້ການປະຕິບັດວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ສອດຄ່ອງກັບກົດໝາຍ ຈໍາເປັນທີ່ສຸດຕ້ອງມີການກວດກາຢ່າງເປັນປົກກະຕິເພື່ອໃຫ້ວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນໄດ້ດໍາເນີນໄປຢ່າງພາວະວິໄສ, ຖືກທິດ ແລະ ມີຄວາມຄືບໜ້າ.

ທຸກໆສາຍພົວພັນສັງຄົມລະຫວ່າງຄົນກັບຄົນລ້ວນແຕ່ພາໃຫ້ເກີດມີພາລະບົດບາດ, ສິດ ແລະ ໜ້າທີ່, ສິດ ແລະ ພັນທະທີ່ມີທັງຝ່າຍໄດ້ຮັບຜົນປະໂຫຍດ ແລະ ຝ່າຍເສຍປະໂຫຍດ ໂດຍສະເພາະແມ່ນຜົນປະໂຫຍດອັນຊອບທໍາໃນການຄຸ້ມຄອງ ແລະ ເຄື່ອນໄຫວການລົງທຶນ ( ລັດຖະບານ ແລະ ຜູ້ລົງທຶນ ), ເມື່ອມີສອງຝ່າຍຄືດັ່ງກ່າວ ການຄຸ້ມຄອງ ແລະ ເຄື່ອນໄຫວການລົງທຶນ ຍິ່ງຕ້ອງມີການກວດກາ, ພ້ອມທັງຈໍາກັດ ຊ່ອງຫວ່າງອັນບໍ່ຖືກຕ້ອງ,ເພື່ອໃຫ້ສາຍພົວພັນຂອງສັງຄົມເຫຼົ່ານັ້ນເປັນໄປຕາມຫຼັກການ, ຈຸດປະສົງ, ເປົ້າໝາຍ, ເງື່ອນໄຂທີ່ວາງໄວ້ໂດຍອອກເປັນນິຕິກໍາຕ່າງໆບົນພື້ນຖານຄວາມສະເໝີພາບ, ບໍລິສຸດ,ຍຸຕິທໍາ ແລະ ສາມາດຮັບປະກັນເຖິງການປົກປ້ອງຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ ແມ່ນສິ່ງສໍາຄັນເປັນຢ່າງຍິ່ງທີ່ຕ້ອງໄດ້ກວດກາຢ່າງເປັນປົກກະຕິ.

2. **ຈຸດປະສົງ ແລະ ຫຼັກການທົ່ວໄປຂອງການກວດກາກິດຈະການລົງທຶນ**

- **ຈຸດປະສົງ:**

ການກວດກາ ແມ່ນມີຈຸດປະສົງເພື່ອເຮັດໃຫ້ລັດຖະທຳມະນູນ ແລະ ກົດໝາຍມີຜົນສັກສິດ, ແກ້ໄຂບັນຫາໃນສັງຄົມໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການສະເພາະ ບໍ່ວ່າຈະເປັນການເຄື່ອນໄຫວຂອງອົງການຈັດຕັ້ງລັດ, ສັງຄົມ ຫຼື ບຸກຄົນ.

ຈຸດປະສົງຂອງການກວດກາກິດຈະການລົງທຶນ ແມ່ນເຮັດແນວໃດໃຫ້ທຸກພາກສ່ວນ ເຄື່ອນໄຫວວຽກງານຂອງຕົນຕາມພາລະບົດບາດ ແລະ ສອດຄ່ອງກັບກົດໝາຍ, ປະຕິບັດຕາມກົດໝາຍທີ່ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນ ໄປຕາມຂັ້ນຕອນທີ່ກຳນົດໄວ້ ບໍ່ມີການເຂົ້າຂ້າງອອກຂາ, ມີຄວາມສະເໝີພາບໃນການປະຕິບັດ, ບໍ່ຂຶ້ນກັບມູນຄ່າທຶນຈະໜ້ອຍ ຫຼື ຫຼາຍ ແລະ ບໍ່ຂຶ້ນກັບຖານະທາງດ້ານເສດຖະກິດ ຫຼື ຖານະທາງດ້ານສັງຄົມ, ໝາຍຄວາມວ່າທຸກເປົ້າໝາຍ ລ້ວນແຕ່ມີຄວາມສະເໝີພາບໃນການປະຕິບັດ.

ນອກຈາກນີ້ ການກວດກາກິດຈະການລົງທຶນ ຍັງມີຈຸດປະສົງໃຫ້ເຫັນໄດ້ດ້ານດີ ແລະ ດ້ານຄົງຄ້າງ ເພື່ອຊອກໃຫ້ເຫັນວິທີແກ້ໄຂຈັດການໃຫ້ສອດຄ່ອງ, ຮັບປະກັນໃຫ້ແກ່ການ ເຄື່ອນໄຫວຂອງບັນດາອົງການຄຸ້ມຄອງ ແລະ ບັນດາຫົວໜ່ວຍທຸລະກິດການລົງທຶນ ມີການພັດທະນາຖືກຕາມມາດຖານ. ຍ້ອນແນວນັ້ນ, ການກວດກາກິດຈະການລົງທຶນ ກໍແມ່ນວິທີການຮັບປະກັນເພື່ອເພີ່ມທະວີການປະຕິບັດລະບຽບ, ວິໄນໃນການຄຸ້ມຄອງລັດຕໍ່ກັບໜ້າທີ່ໃນການຄຸ້ມຄອງ ແລະ ເຄື່ອນໄຫວການລົງທຶນ. ການກວດກາກິດຈະການລົງທຶນ ກໍຊ່ວຍໃຫ້ແກ່ລັດຄຸ້ມຄອງການລົງທຶນ, ກຳໄດ້ຄວາມນຶກຄິດ, ຄວາມປາດຖະໜາ, ທ່າທີຂອງເປົ້າ ໝາຍຄຸ້ມຄອງ, ຍົກສູງຄວາມຮັບຜິດຊອບຂອງອົງການກວດກາ ແລະ ເປົ້າໝາຍຄຸ້ມຄອງໃນການປະຕິບັດໜ້າທີ່.

ດັ່ງນັ້ນ, ຈຶ່ງສາມາດສະຫຼຸບໄດ້ວ່າ: ຈຸດປະສົງຂອງວຽກງານກວດກາກິດຈະການລົງທຶນ ແມ່ນເພື່ອ: ຕິດຕາມ, ກວດກາ ແລະ ຕີລາຄາການເຄື່ອນ ໄຫວລົງທຶນຂອງບັນດາ ພາກສ່ວນຕ່າງໆ ແຕ່ລະຂັ້ນ; ຮັບປະກັນຜົນສັກສິດ, ປະສິດທິພາບຂອງກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງການຈັດຕັ້ງເຄື່ອນໄຫວເສດຖະກິດ, ໂຄງການຂອງຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ; ຮັບປະກັນໂຄງການລົງທຶນໄດ້ຮັບການຈັດຕັ້ງປະຕິບັດຕາມຂໍ້ກຳນົດຂອງກົດໝາຍ, ຮັບປະກັນຕໍ່ຈຸດປະສົງ ແລະ ປະສິດທິຜົນເສດຖະກິດ-ສັງຄົມຂອງໂຄງການ, ປັບປຸງບັນຫາທີ່ບໍ່ສອດຄ່ອງ, ບັນຫາການລະເມີດໃນການຈັດຕັ້ງປະຕິບັດປັບປຸງໃຫ້ທັນການ ຫຼື ນຳສະເໜີໃຫ້ມີການປັບປຸງກົດໝາຍ ແລະ ລະບຽບການ, ນະໂຍບາຍທີ່ກ່ຽວຂ້ອງກັບການລົງທຶນ ແລະ ແກ້ໄຂບັນຫາການລະເມີດຕາມຂໍ້ກຳນົດຂອງກົດໝາຍ, ຕິດຕາມກວດກາ, ແກ້ໄຂ ແລະ ຈັດຕັ້ງປະຕິບັດມາດຕະການແກ້ໄຂບັຫາທີ່ເກີດຂຶ້ນ; ຍ້ອງຍໍອົງການ, ການຈັດຈັ້ງ, ບຸກຄົນທີ່ມີຜົນງານໃນການປະຕິບັດນະໂຍບາຍ, ກົດໝາຍກ່ຽວກັບການລົງທຶນ.

- **ຫຼັກການ:**

ຫຼັກການທົ່ວໄປຂອງການກວດກາກິດຈະການລົງທຶນລວມມີ:

- ປະຕິບັດຕາມບັນດາຫຼັກການຕິດຕາມ, ກວດກາ, ຕີລາຄາການຄຸ້ມຄອງ ແລະ ເຄື່ອນໄຫວການລົງທຶນຕາມຂໍ້ກຳນົດຂອງກົດໝາຍ ແລະ ລະບຽບການກ່ຽວກັບການຕິດຕາມ, ກວດກາ ແລະ ຕີລາຄາການເຄື່ອນໄຫວລົງທຶນ;

- ຖືກຕາມສິດອຳນາດ, ສິດ ແລະ ໜ້າທີ່, ຂັ້ນຕອນ, ລະບຽບການ ແລະ ບົນພື້ນຖານຂໍ້ກຳນົດຂອງກົດໝາຍ;

- ບໍ່ມີຊ່ອງຫວ່າງ ຫຼື ຊໍ້າຊ້ອນໃນຂອບເຂດວິຊາ, ເວລາ ແລະ ເນື້ອໃນຂອງການກວດກາ; ປະສານງານໃນການຕິດຕາມ, ກວດກາ ແລະ ປະເມີນຜົນ (ຕີລາຄາ);

- ທັນການ, ພາວະວິໄສ, ຊັດຈນ ແລະ ເຂັ້ມງວດ;

- ເປີດເຜີຍ, ຍຸຕິທຳ, ບໍ່ສ້າງສິ່ງກີດຂວາງ, ສິ່ງຜົນສະທ້ອນອັນບໍ່ດີເຖິງການເຄື່ອນໄຫວຂອງບັນດາອົງການ, ການຈັດຕັ້ງເສດຖະກິດ, ໂຄງການລົງທຶນທັງພາຍໃນ ແລະ ຕ່າງປະເທດທີ່ກຳລັງຢູ່ໃນໄລຍະຕິດຕາມ, ກວດກາ.

**3. ອົງການກວດກາວຽກງານການສົ່ງເສີມການລົງທຶນ**

ອົງການກວດກາວຽກງານການສົ່ງເສີມການລົງທຶນ ປະກອບດ້ວຍ 2 ອົງການຄື:

**1) ອົງການກວດກາພາຍໃນ:**

ການກວດກາພາຍໃນ ໝາຍເຖິງການຕິດຕາມກວດກາຂອງລັດຖະບານ ກ່ຽວກັບກິດຈະການລົງທຶນຢ່າງລວມສູນ, ຊຶ່ງລວມມີ: ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການກວດກາພາຍໃນຂອງບັນດາຂະແໜງການທີ່ກ່າວມາຂ້າງເທິງນັ້ນ ແມ່ນການປະຕິບັດການກວດກາຕາມສາຍຕັ້ງຢູ່ໃນລະບົບການຄຸ້ມຄອງ ແລະ ບໍລິຫານພາຍໃນຂອງຕົນເອງ ຄືບັນດາຂະແໜງການທີ່ກ່າວມາຂ້າງເທິງນັ້ນມີສິດ ແລະ ໜ້າທີ່ໃນການກວດກາກິດຈະການລົງທຶນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍເປັນເສນາທິການໃຫ້ແກ່ຄະນະນຳຂອງຕົນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວໃນການກວດກາກິດຈະການລົງທຶນເປັນແຕ່ລະໄລຍະ ແລະ ຮີບດ່ວນ.

ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການການລົງທຶນປະຕູດຽວຂັ້ນແຂວງ ກໍມີບົດບາດໃນການປະກອບສ່ວນໃນການກວດກາກິດຈະການລົງທຶນ, ເຊັ່ນ: “ ຕິດຕາມ, ກວດກາການລົງທຶນແລ້ວລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ”[3].

ຄະນະກຳມະການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມ, ກວດກາການລົງທຶນຕາມທີໄດ້ກຳນົດໄວ້ໃນກົດໝາຍ.

**2) ການກວດກາພາຍນອກ**:

ການກວດກາພາຍນອກ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

---

[3] ຂໍ້ຕົກລົງຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ສະບັບເລກທີ 011/ຄລທ.ຂ.ຈສ, ລົງວັນທີ 20 ມີນາ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສາຍງານການບໍລິການ ການລົງທຶນປະຕູດຽວດຽວຂັ້ນແຂວງ, ຂໍ້ 18, ມາດຕາ 3.

ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດ[4].

ການກວດກາຂອງສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວການລົງທຶນແມ່ນການກວດກາພາຍນອກ, ການກວດກາໂດຍທົ່ວໄປປະກອບມີສອງວິທີຄື: ການກວດກາໂດຍປົກກະຕິ ແລະ ການກວດກາຕາມຄຳຮ້ອງຂໍຄວາມເປັນທຳ ,ຊຶ່ງການກວດກາປົກກະຕິຂອງສະພາແຫ່ງຊາດກ່ຽວກັບກິດຈະການລົງທຶນ ເປັນການກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍເວົ້າລວມ, ເວົ້າສະເພາະແມ່ນການຕິດຕາມກວດກາການປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຂອງອົງການທີ່ເຮັດໜ້າທີ່ໃນການຄຸ້ມຄອງການລົງທຶນ; ສ່ວນການກວດກາຕາມຄຳຮ້ອງຂໍຄວາມເປັນທຳ ໝາຍຄວາມວ່າ ສະພາແຫ່ງຊາດຈະມອບໝາຍໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງໃນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດຕິດຕາມກວດກາສະເພາະການເຄື່ອນໄຫວລົງໃດໜຶ່ງ ທີ່ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຈາກບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ.

ເມື່ອຂະຫຍາຍຄວາມ ສິດ ແລະ ໜ້າທີ່ໃນຂໍ້ສີ່ຂ້າງເທິງ ສາມາດເຂົ້າໃຈໄດ້ໂດຍຈະແຈ້ງວ່າ ສະພາແຫ່ງຊາດຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍກໍລວມເຖິງກົດໝາຍວ່າດ້ວຍການຈັດຕັ້ງປະຕິກົດໝາຍວ່າດ້ວຍການສົ່ງເສີມການລົງທຶນເຊັ່ນດຽວກັນ.

### 4. ເນື້ອໃນການກວດກາກິດຈະການ ການລົງທຶນ

ເນື້ອໃນການກວດກາ ມີດັ່ງນີ້[5]:

**1) ກວດກາການປະຕິບັດສັນຍາການລົງທຶນ:**

ການກວດກາດັ່ງກ່າວນີ້ແມ່ນເພື່ອຮັບປະກັນສິດ, ຜົນປະໂຫຍດອັນຊອບທຳຂອງຄູ່ສັນຍາ ກໍຄືຝ່າຍທີສາມ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດສັນຍາການລົງທຶນໃຫ້ສອດຄ່ອງກັບເນື້ອໃນສັນຍາ ແລະ ກົດໝາຍຂອງ ສປປ ລາວ;

**2) ກວດກາການປະຕິບັດຂັ້ນຕອນຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ:**

ການກວດການດັ່ງກ່າວນີ້ ກໍເພື່ອຊອກໃຫ້ເຫັນຄວາມສອດຄ່ອງຂອງຂັ້ນຕອນ ແລະ ຄວາມຜິດພາດຂອງຂັ້ນຕອນການລົງທຶນ ວ່າໄດ້ປະຕິບັດຖືກຕາມບົດວິພາກເສດຖະກິດ-ເຕັກນິກໃນການເຄື່ອນໄຫວລົງທຶນບໍ?;

**3) ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ:**

ການກວດກາໃນກໍລະນີແມ່ນແນໃສ່ທຸກກິດຈະການລົງທຶນຕ້ອງຮັບປະກັນຕໍ່ກັບການປົກປັກຮັກສາສິນແວດລ້ອມ , ເພື່ອບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ;

**4) ກວດກາ ການປະຕິບັດມາດຕະການຄວາມປອດໄພຂອງແຮງງານ:**

ແຮງງານແມ່ນປັດໃຈສຳຄັນຕໍ່ກັບການຄົງຕົວ ແລະ ຂະຫຍາຍຕົວໃນເວລາເຄື່ອນໄຫວກິດຈະການລົງທຶນ.ສະນັ້ນ, ການກວດກາການນຳໃຊ້ແຮງງານແມ່ນເປັນບັນຫາສຳຄັນ ເພື່ອຫຼີກລ້ຽງບໍ່ໃຫ້ມີປະກົດການໃຊ້ແຮງງານທີ່ຜິດກົດໝາຍ;

**5) ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ:**

---

[4] ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015, ມາດຕາ 2

[5] ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 104.

ໃນເວລາດຳເນີນການຄຸ້ມຄອງ ແລະ ເຄື່ອນໄຫວລົງທຶນຈຳເປັນຕ້ອງໄດ້ມີການຕິດຕາມກວດກາຢ່າງເປັນປົກກະຕິ ວ່າໄດ້ມີການຄຸ້ມຄອງ ແລະ ເຄື່ອນໄຫວລົງທຶນຖືກຕາມຫຼັກການ ແລະ ຂໍ້ກຳນົດຂອງກົດໝາຍບໍ? ເພື່ອປົກປ້ອງບໍ່ໃຫ້ມີຄວາມສ່ຽງຈາກການລະເມີດກົດໝາຍ ຊຶ່ງຈະສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກິດຈະການລົງທຶນ ເຊັ່ນ: ເກີດມີຂໍ້ຂັດແຍ່ງ, ບັນຫາການບໍ່ປະຕິບັດພັນທະ...

ອົງການກວດກາ ວຽກງານສົ່ງເສີມການລົງທຶນ ມີສິດສະເໜີມາດຕະການແກ້ໄຂ ຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

## 5. ຮູບການ ການກວດກາກິດຈະການ ການລົງທຶນ

ການກວດກາມີ 3 ຮູບການ ດັ່ງນີ້:

### 1) ການກວດກາ ຕາມລະບົບປົກກະຕິ:

ແມ່ນການກວດກາຕາມແຜນການທີ່ວາງໄວ້ເປັນແຕ່ລະໄລຍະ ແລະ ລະບຽບການທີ່ວາງໄວ້; ການກວດກາ ຕາມລະບົບປົກກະຕິ ແມ່ນການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງ ຄັ້ງຕໍ່ປີ ໂດຍແມ່ນຫ້ອງການບໍລິການ ການລົງທຶນປະຕູດຽວເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

### 2) ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ:

ແມ່ນານກວດກາທີ່ມີການແຈ້ງລ່ວງໜ້າ, ເພື່ອຮັບປະກັນຕໍ່ການກວດກາໃຫ້ທັນການ; ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ 24 ຊົ່ວໂມງ.

### 3) ການກວດກາແບບກະທັນຫັນ:

ແມ່ນການກວດກາໂດຍຮີບດ່ວນທີ່ຈຳເປັນ, ບໍ່ຢູ່ໃນແຜນການທີ່ວາງໄວ້ ເພື່ອຮັບປະກັນຕໍ່ການກວດກາໃຫ້ມທັນການ; ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດດ້ານເອກະສານ ແລະ ປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## References:


1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015;
4. ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018;

5. ຂໍ້ຕົກລົງຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ສະບັບເລກທີ 011/ຄລທ.ຂ.ຈສ , ລົງວັນທີ 20 ມີນາ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວດຽວຂັ້ນແຂວງ.